ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:(856-21)520715,ແຟັກ:(856-21)256259

ເລກທີ: 023 /ລອທ

ນະຄອນຫຼວງວຽງຈັນ, 25 MAR 2021

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2021

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ຄັ້ງທີ 01 ປະຈຳປີ 2021 ຊຶ່ງຈັດຂຶ້ນໃນວັນທີ 24 ມີນາ 2021 ເວລາ 14:00 ໂມງ ໂດຍມີລາຍລະອຽດ ດັ່ງລຸ່ມນີ້:

1. ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ແລະ ບົດລາຍງານການເງິນຂອງ ບໍລິສັດ ປະຈຳປີ 2020 ຈາກບໍລິສັດຜູ້ກວດສອບພາຍນອກ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.
2. ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
3. ຮັບຮອງເອົາການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດປະຈຳປີ 2020 ເນື່ອງຈາກບໍລິສັດຂາດທຶນ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
4. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດປະຈຳປີ 2021 ໂດຍມີຄ່າບໍລິການບໍ່ເກີນ 38,000 ໂດລາສະຫະລັດ.

5. ຮັບຮອງການລາອອກຈາກຕຳແໜ່ງ ຜູ້ອຳນວຍການ ຂອງທ່ານ ອຸດົມ ແກ້ວທະວົງ ແລະ ແຕ່ງຕັ້ງ ທ່ານ ພົງຖານ ພິດຈຳນົງ ເປັນຜູ້ອຳນວຍການຄົນໃຫມ່ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຫຸ້ນພິຈາລະນາ ແລະ ຮັບຮອງເອົາ.
6. ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.
7. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ດັ່ງນີ້:
   - ກຳນົດເອົາວັນທີ 02 ເມສາ 2021 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020.
   - ກຳນົດເອົາວັນທີ 22 ເມສາ 2021 ເປັນວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ໂດຍກຳນົດວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ຄື:
     1. ພິຈາລະນາ ແລະ ຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019.
     2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2020.
     3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2021.
     4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2020 ເນື່ອງຈາກບໍລິສັດຂາດທຶນ.
     5. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2021.
     6. ພິຈາລະນາ ແລະ ຮັບຮອງການລາອອກຈາກຕຳແໜ່ງ ຜູ້ອຳນວຍການ ຂອງທ່ານ ອຸດົມ ແກ້ວທະວົງ ແລະ ແຕ່ງຕັ້ງ ທ່ານ ພົງຖານ ພິດຈຳນົງ ເປັນຜູ້ອຳນວຍການຄົນໃຫມ່.
     7. ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.
     8. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ
ປະທານກອງປະຊຸມ/ຮອງປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ນາງ ຄຳແພງ ພັດທະດາວົງ